DSHS WASHINGTON STATE Department of Social and Health Services

ການຊ່ວຍເຫລືອເງິນ ແລະ ອາຫານຂອງທ່ານ ສິດທິ ແລະ ຄວາມຮັບຜິດຊອບ
Your Cash and Food Assistance Rights and Responsibilities

ຊື່ຂອງລູກຄ້າ (ຫົວໜ້າຄອບຄົວ)
ເລກ ID ລູກຄ້າ

ຄວາມຮັບຜິດຊອບຂອງທ່ານ (ທ່ານຕ້ອງ)

- **ເອົາໃຫ້ພວກເຮົາຮາຍຮະອຽດທີ່ພວກເຮົາຕ້ອງການເພື່ອຈະຕັດສິນວ່າທ່ານມີເງື່ອນໄຂໄດ້ຮັບ ຫລື ບໍ່.**
- **ເອົາໃຫ້ພວກເຮົາ ຫລັກຖານເມື່ອເວລາຕ້ອງການ.** ພວກເຮົາຈະອາດຈະສາມາດເອົາໃຫ້ທ່ານໄດ້. ຮາຍຮະອຽດທີ່ທ່ານເອົາໃຫ້ກົມຈະຖືກພິສູດໂດຍເຈົ້າໜ້າທີ່ຂອງຣັດຖະບານກາງ ແລະ ຂອງຣັດ. ຫລັກຖານສາມາດລວມເອົາການຕິດຕໍ່ຕິດຕາມມາຈາກພະນັກງານຂອງກົມລວມທັງນັກສືບສວນການສໍ້ໂກງ.
- **ຮາຍຮະອຽດທີ່ຖືກລາຍງານໃຫ້ກົມ Department of Social and Health Services** ອາດຈະສະທ້ອນເຖິງເງື່ອນໄຂຮັບເອົາການຄຸ້ມກັນການປິ່ນປົວສຸຂະພາບທີ່ຖືກປົກຄອງໂດຍ Health Care Authority ແລະ Health Benefit Exchange.
- **ລາຍງານການປ່ຽນແປງ** (ເຊັ່ນວ່າທີ່ຢູ່,ຮາຍໄດ້,ອື່ນໆ) ຕາມທີ່ຖືກກຳນົດໄວ້ຢູ່ໃນກົດໝາຍ WAC 388-418-0005. ໃຫ້ລາຍງານການປ່ຽນແປງກ່ອນວັນທີ 10 ຂອງເດືອນຕໍ່ມາ.
- **ຮ່ວມມືນຳພະແນກ Division of Child Support (DCS)** ຖ້າຫາກວ່າທ່ານຮັບເອົາເງິນ TANF. ທ່ານຕ້ອງຊ່ວຍເຫລືອພະແນກ DCS ກໍ່ຕັ້ງ, ດັດແປງ, ຫລື ບັງຄັບເກັບເງິນລ້ຽງລູກສຳລັບເດັກນ້ອຍຢູ່ໃນການເບິ່ງແຍງດູແລຂອງທ່ານ, ແລະ ກໍ່ຕັ້ງສາຍເລືອດພໍ່ລູກ (ຖ້າຈຳເປັນ) ຕາມທີ່ຖືກບົ່ງຢູ່ໃນ WAC 388-422-0005. ທ່ານຈະປະຕິເສດທີ່ຈະຮ່ວມມືນຳພະແນກ DCS ໄດ້ຖ້າຫາກວ່າທ່ານສາມາດສະແດງໃຫ້ເຫັນວ່າທ່ານມີເຫດຜົນດີທີ່ຈະເຊື່ອວ່າການຮ່ວມມືນຳພະແນກ DCS ຈະເອົາທ່ານ, ລູກຂອງທ່ານ, ຫລື ເດັກນ້ອຍຢູ່ໃນການເບິ່ງແຍງດູແລຂອງທ່ານໃສ່ໃນການສ່ຽງອັນຕະຣາຍຈາກພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ.
- **ຮ້ອງຂໍເອົາ** ແລະ ທຳຄວາມພະຍາຍາມອັນເໝາະສົມເພື່ອຈະມີຮາຍໄດ້ທີ່ອາດເປັນໄປໄດ້ຈາກບ່ອນມາບ່ອນອື່ນເມື່ອທ່ານຮ້ອງຂໍເອົາ ຫລື ຮັບເອົາການຊ່ວຍເຫລືອເງິນສົດ.
- **ປະກອບໃບລາຍງານ ແລະ ໃບທວນຄືນທີ່ຖືກກຳນົດໄວ້ໃຫ້ແລ້ວ.**
- **ປະຕິບັດຕາມກົດກຳນົດວຽກງານ** ສຳລັບການຊ່ວຍເຫລືອເງິນ ແລະ ການຊ່ວຍເຫລືອອາຫານ.
- **ບອກພວກເຮົາ** ຖ້າຫາກວ່າທ່ານຢາກໃຫ້ຄົນໃດຄົນນຶ່ງອີກທີ່ຈະໃຊ້ການຊ່ວຍເຫລືອອາຫານຂອງທ່ານໃນນາມຂອງທ່ານ.
- **ຮ່ວມມືນຳການກວດເບິ່ງຄືນໃນການຄວບຄຸມຄຸນນະພາບຂອງພວກເຮົາ.**
- **ໃຊ້ການຊ່ວຍເຫລືອອາຫານ** ເພື່ອຈະຊື້ເອົາອາຫານສຳລັບສະມາຊິກຄອບຄົວຂອງທ່ານເທົ່ານັ້ນ.
- **ໃຊ້ການຊ່ວຍເຫລືອເງິນສົດ** ສຳລັບຜົນປະໂຍດຂອງສະມາຊິກຄອບຄົວທ່ານເທົ່ານັ້ນ.
- **ທ່ານຕ້ອງເອົາເລກຄວາມປອດພັຍສັງຄົມໃຫ້** (SSN) ຫລື ສະພາບການເຂົ້າເມືອງເທົ່ານັ້ນສຳລັບບຸກຄົນຜູ້ທີ່ຂໍເອົາການຊ່ວຍເຫລືອ. ຖ້າຫາກວ່າທ່ານເລືອກທີ່ຈະບໍ່ເອົາເລກ SSN ຫລື ສະພາບການເຂົ້າເມືອງໃຫ້ ສຳລັບສະມາຊິກຄອບຄົວຜູ້ທີ່ບໍ່ໄດ້ຂໍເອົາ, ຮາຍໄດ້ ແລະ ຊັບສົມບັດຂອງສະມາຊິກຄອບຄົວທຸກໆຄົນຜູ້ທີ່ບໍ່ໄດ້ຂໍເອົາ ຍັງຈະຕ້ອງຖືກພິສູດຢູ່, ຖ້າຕ້ອງການ, ເພື່ອຈະພິຈາຣະນາເບິ່ງເງື່ອນໄຂໄດ້ຮັບ.

ສິດທິຂອງທ່ານ (ພວກເຮົາຕ້ອງ)

- **ຮັບເອົາຄຳຮ້ອງ** ທີ່ມີຊື່, ທີ່ຢູ່, ແລະ ລາຍເຊັນຂອງທ່ານ ຫລື ລາຍເຊັນຂອງຜູ້ຕາງໜ້າທີ່ຖືກອະນຸຍາດຂອງທ່ານ.
- **ຊ່ວຍທ່ານຂຽນປະກອບໃບຟອມຂອງ DSHS.**
- **ດຳເນີນ** ຄຳຮ້ອງຂໍເອົາການຊ່ວຍເຫລືອອາຫານຂອງທ່ານພາຍໃນ 7 ວັນ ຖ້າຫາກວ່າທ່ານມີເງື່ອນໄຂໄດ້ຮັບການບໍຣິການຮີບດ່ວນ.
- **ເອົາໃບຮັບໃຫ້ທ່ານ** ຖ້າຫາກວ່າທ່ານຂໍເອົາເມື່ອເວລາທ່ານສົ່ງເອກສານເຂົ້າມາ.
- **ເອົາໜັງສືຕັດສິນໃຫ້ທ່ານ**, ໃນກໍຣະນີສ່ວນຫລາຍ, ພາຍໃນ 30 ວັນ.
- **ທ່ານຈະປະຕິເສດທີ່ຈະເວົ້ານຳນັກສືບສວນຂອງ Fraud Early Detection** (FRED) ຈາກຫ້ອງການເຣື່ອງການສໍ້ໂກງ ແລະ ການຮັບຜິດຊອບ. ທ່ານບໍ່ຕ້ອງປ່ອຍໃຫ້ນັກສືບສວນເຂົ້າມາໃນເຮືອນຂອງທ່ານ. ທ່ານຈະຂໍໃຫ້ນັກສືບສວນກັບຄືນມາໃຫມ່ໃນເວລາອື່ນໄດ້. ອັນນີ້ຈະບໍ່ສະທ້ອນເຖິງເງື່ອນໄຂຮັບເອົາການຊ່ວຍເຫລືອຂອງທ່ານ.

ສິດທິຂອງທ່ານ (ພວກເຮົາຕ້ອງ) (ຕໍ່)

- **ທ່ານຈະຂໍເອົາການຟັງເຣື່ອງຈາກອຳນາດການປົກຄອງໄດ້** ຖ້າຫາກວ່າທ່ານບໍ່ເຫັນພ້ອມນຳການຕັດສິນທີ່ກົມໄດ້ເຮັດໃສ່ສຳນວນເອກສານຂອງທ່ານ. ທ່ານຍັງຈະຂໍໃຫ້ຜູ້ຄວບຄຸມງານ ຫລື ຜູ້ປົກຄອງທີ່ຈະກວດເບິ່ງຄືນໃນຄຳຕັດສິນ ຫລື ການກະທຳທີ່ຂັດແຍ້ງກັນໂດຍບໍ່ຕ້ອງໄດ້ສະທ້ອນເຖິງສິດທິຂອງທ່ານໃນການຟັງເຣື່ອງຈາກອຳນາດການປົກຄອງ.
- **ພວກເຮົາຕ້ອງໄດ້ແຈ້ງບອກທ່ານ** ກ່ຽວກັບກົດຣະບຽບຂອງຂອບເຂດເວລາ 60-ເດືອນພາຍໃຕ້ໂຄງການ Temporary Assistance for Needy Families (ການຊ່ວຍເຫລືອຊົ່ວຄາວສຳລັບຄອບຄົວຂັດສົນ) (TANF). ຂອບເຂດເວລາອັນນີ້ບໍ່ກ່ຽວນຳການຊ່ວຍເຫລືອ Basic Food (ອາຫານຈຳເປັນ), ຂອງທ່ານ, ຫລື ໂຄງການຊ່ວຍເຫລືອຄ່າເບິ່ງແຍງເດັກນ້ອຍ.

ສິ່ງທີ່ທ່ານຄວນຈະຮູ້ຈັກກ່ຽວກັນບັດ EBT ຂອງທ່ານ

- **ການໃຊ້ການຊ່ວຍເຫລືອໄປໃນທາງຜິດ:** ການຊ່ວຍເຫລືອອາຫານ ແລະ ເງິນສິດທີ່ຖືກແຈກຢາຍໃຫ້ໂດຍຜ່ານບັດ EBT ຈະເອົາໃຫ້ກົມ DSHS ປະວັດຂອງການຝາກຖອນຢູ່ບ່ອນທີ່ທ່ານໃຊ້ການຊ່ວຍເຫລືອຂອງທ່ານ. ກົມຈະໃຊ້ຣາຍຣະອຽດຂອງການຝາກຖອນໃນການສືບສວນກ່ຽວກັບການໃຊ້ການຊ່ວຍເຫລືອເງິນສິດໄປໃນທາງຜິດ ຫລື ການແລກປ່ຽນການຊ່ວຍເຫລືออาหารสำหรับเงินสิด ຫລື ສິ່ງຂອງມີຄຸນຄ່າແນວອື່ນ (ການຄ້າຂາຍຜິດກົດໝາຍ).
- **ການເຮັດບັດ EBT ໃບໃຫມ່ແທນ:** ພວກເຮົາອາດຈະເກັບເອົາເງິນສຳລັບການເຮັດບັດ EBT ໃບໃຫມ່ແທນ. ເກັບຮັກສາບັດ EBT ຂອງທ່ານໄວ້ ແລະ ເລກປະຈຳຕົວສ່ວນຕົວ (PIN) ຂອງທ່ານໄວ້ໃຫ້ປອດພັຍ ແລະ ບໍ່ໃຫ້ໃຜຮູ້ຈັກ.
- **ບັດ EBT ທີ່ມີຈຳນວນເງິນຍັງເຫລືອສູງ:** ຖ້າຫາກວ່າທ່ານບໍ່ໃຊ້ການຊ່ວຍເຫລືອຂອງທ່ານເປັນເວລາຫລາຍເດືອນຕໍ່ເທື່ອນຶ່ງ ຫລື ສະສົມຈຳນວນຍັງເຫລືອສູງຫລັງຈາກຫລາຍໆເດືອນ, ພວກເຮົາອາດຈະຕິດຕໍ່ໄປຫາທ່ານເພື່ອຈະກວດເບິ່ງສະພາບການຄືນ ຫລື ຄວາມຕ້ອງການສຳລັບການຊ່ວຍເຫລືອຂອງທ່ານຄືນ.

ສິ່ງທີ່ທ່ານຄວນຈະຮູ້ຈັກ (Basic Food)

- **ພວກເຮົາສິ່ງຣາຍຣະອຽດ** ກ່ຽວກັບບຸກຄົນທີ່ຮ້ອງຂໍເອົາການຊ່ວຍເຫລືอ Basic Food ไปหาห้องการรัดถะบานกางบ่อมอื่นเผื่อจะกวดเบิ่งว่ารายระอุดนั้นถืกต้อง ทลื บ่. ถ้าหากว่ารายระอุดแมวใดแมวนึ่งบ่ถืกต้อง, บุกคนผู้ที่ร้องขอเอาอาดจะบ่ได้รับอาหารจำเป็น. ถ้าหากว่าบุกคนเอารายระอุดที่เอาเจ้าร้จักว่าบ่ถืกต้องให้, เอาเจ้าสามาดถืกตัดสินลิงโทดทางอาดสะยากันได้. การปับไหมลิงโทดสำลับการล่วงละเมิดกิดระบุยของโคงการ Basic Food โดยเจตมาจะแตกต่างไปตั้งแต่การหมิดสิดจากโคงการ, ไปหาการปับไหม, หลื การติดคุกที่อาดจะเป้นไปได้.
- **ถ้าหากว่าท่านขาย, พะยายามที่จะขาย, ແลกປ່ຽน ทลื บ่ริจากการอ่วยเหลืออาหานของเจ้า** สำลับแมวใดแมวนึ่งที่มีคุนค่าอั้นว่าเงินสิด, ยาเสบติด, อาวุด, ทลื แมวใดแมวนึ่งนอก จากอาหานจากร้านค้าบ่อมที่ถืกอะนุยาด (การค้าขายผิดต่กิดหมาย), ท่านอาดจะหมิดสิดจากการรับเอาการช่วยเหลืออาหานสำลับเวลาย่างหน้อยนึ่งปีไปรอดการหมิดสิดสูงสุดตะลอดชีวิด ในความผิดเพื่อทำอิด. การหมิดสิดอันนี้ดำเนินต่ไปเถิงแม่นว่าท่านจะออกไปจากรัดอ้ยตัน ແລะ ร้องขอเอาการช่วยเหลือยู่ในรัดอื่น.
- **ถ้าหากว่าท่านถืกบิ่งให้เอ้าร่วมในกิดกำมิดวุดงานของโคงการ Basic Food,** ແລะ ผิดพาดที่จะเอ้าร่วม, ท่านสามาดถืกหมิดสิดสำลับนึ่งเดือน ແລะ จินกว่าท่านจะยอมเรัดตามกิดกำมิดวุดงานสำลับความผิดพาดเพื่อทำอิด;สามเดือน ແລะ จินกว่าท่านจะยอมเรัดตามสำลับความผิดพาดเพื่อทิสอง; ແລะ หิกเดือน ແລะ จินกว่าท่านจะยอมเรัดตามสำลับความผิดพาดเพื่อทิสาม ແລะ แต่ละเพื่อหลังจากนั้น.
- **ท่านอาดจะถืกเอาออกจากโคงการ Basic Food** สำลับการเรัดผิดกิดระบุยของโคงการ Basic Food ตามที่ถืกบันระยายยู่ในคำเตือนเรื่องการปับไหมลิงโทดของโคงการ Basic Food ที่ถืกบิ่งยู่หน้านี้.
- **ลายงานรายจ่ายของครอบครัวถ้าหากว่าท่านต้องการให้กົมลวมเอาค่าเหล่านี้ใส่นำสำลับโคงการ Basic Food.** ถ้าหากว่าท่านบ่ลายงาน ແລะ สิ่งหลักฐานของรายจ่ายเหล่านี้มาให้, แปว่าท่านบอกว่าท่านบ่ต้องการให้พวกเราที่จะใช้รายจ่ายเหล่านี้เพื่อจะตัดสินว่าท่านสามาดได้รับโคงการ Basic Food เพิ่มเติมอีก หลื บ่.

ສິ່ງທີ່ທ່ານຄວນຈະຮູ້ຈັກ (ເງິນສົດ - TANF)

ໂດຍການຮັບເອົາການຊ່ວຍເຫລືອ **Temporary Assistance for Needy Families (TANF)** ທ່ານແຕ່ງຕັ້ງສິດທິໃນເງິນລ້ຽງລູກ ແລະ ເງິນລ້ຽງຢູ່ຜົວເມັຍຂອງທ່ານໃຫ້ແກ່ພະແນກ Division of Child Support. ອັນນີ້ຫມາຍຄວາມວ່າພະແນກ DCS ຈະເກັບຮັກສາເອົາໄວ້ ເງິນລ້ຽງລູກປ້ອນຫລັງ (ເງິນຍັງຕົກຢູ່ຜ່ານມາ) ທີ່ເກີດຂຶ້ນໃນຣະຫວ່າງທີ່ທ່ານໄດ້ຮັບເງິນ TANF. DCS ຈະສົ່ງໄປໃຫ້ທ່ານເງິນລ້ຽງລູກປັດຈຸບັນທີ່ຖືກເກັບເອົາໃນຂະນະທີ່ທ່ານໄດ້ຮັບເງິນ TANF.

- **ທ່ານຕ້ອງບອກພະແນກ DCS ໂດຍທັນທີໂລດຖ້າຫາກວ່າທ່ານໄດ້ຮັບເງິນຈ່າຍຄ່າລ້ຽງລູກ ຫລື ການຊ່ວຍເຫລືອ** ສຳລັບເດັກນ້ອຍໃນຂະນະທີ່ໄດ້ຮັບເງິນ TANF.
- **ຖ້າຫາກວ່າທ່ານຢຸດຮັບເອົາເງິນ TANF,** ທ່ານຕ້ອງໄດ້ບອກພະແນກ DCS ກ່ຽວກັບການປ່ຽນແປງຕ່າງໆທີ່ສະທ້ອນເຖິງເງິນລ້ຽງລູກ, ເຊັ່ນວ່າລູກບໍ່ໄດ້ອາສັຍຢູ່ນຳທ່ານອີກແລ້ວ ຫລື ທີ່ຢູ່ຂອງທ່ານປ່ຽນ.
- **ຖ້າຫາກວ່າທ່ານໄດ້ຮັບເງິນ TANF,** ທ່ານຈະຮ້ອງຂໍເອົາເງິນ**ພິເສດໄດ້**ເພື່ອຈະຊ່ວຍຈ່າຍສຳລັບຄ່າເຮືອນສຸກເສີນຊົ່ວຄາວ.

ສິ່ງທີ່ທ່ານຄວນຈະຮູ້ຈັກ (ເງິນສົດ - RCA)

ໂດຍການຮັບເອົາເງິນ **Refugee Cash Assistance (RCA):**

- **ທ່ານຕ້ອງເປັນຄົນໂສດຫລືຄົນແຕ່ງງານບໍ່ມີເດັກນ້ອຍຢູ່ໃນຄອບຄົວ.** ທ່ານຕ້ອງບອກພວກເຮົາຖ້າຫາກວ່າທ່ານກາຍເປັນຖືພາຕັ້ງທ້ອງຫລືຕ້ອງເບິ່ງແຍງດູແລເດັກນ້ອຍຍ້ອນວ່າທ່ານຈະມີເງື່ອນໄຂໄດ້ຮັບໂຄງການຊ່ວຍເຫລືອເງິນສົດຕ່າງໂຄງການ.
- **ທ່ານມີເງື່ອນໄຂທີ່ຈະໄດ້ຮັບຮອດສິບສອງ (12) ເດືອນໃນການຊ່ວຍເຫລືອ Refugee Cash Assistance** ໂດຍອີງຕາມສະພາບຂອງການເຂົ້າເມືອງຂອງທ່ານແລະວັນທີທີ່ທ່ານກາຍເປັນມີເງື່ອນໄຂໄດ້ຮັບໂຄງການອົບພະຍົບຂອງຣັດຖະບານກາງແລະການບໍຣິການ.
- **ທ່ານຕ້ອງເຂົ້າຮ່ວມໃນການບໍຣິການວຽກງານແລະການຝຶກຝົນ** ພາຍໃນ 30 ວັນຂອງການຮັບເອົາການຊ່ວຍເຫລືອ,ຊຶ່ງສາມາດລວມເອົາກິຈກັມເພື່ອຈະຊ່ວຍເຫລືອທ່ານໄດ້ວຽກງານເຮັດຫລືຮຽນພາສາອັງກິດ. ທ່ານຈະບໍ່ຕ້ອງໄດ້ເຂົ້າຮ່ວມໃນການບໍຣິການເຫລົ່ານີ້ຖ້າຫາກວ່າທ່ານມີຄວາມເສັຽອົງຄະຮ້າຍແຮງຫລືຊຳເຮື້ອ,ຕ້ອງຢູ່ເຮືອນເພື່ອຈະເບິ່ງແຍງດູແລຜູ້ໃຫຍ່ທີ່ມີຄວາມເສັຽອົງຄະຄົນອື່ນ,ມີອາຍຸ 60 ປີຫລືແກ່ກວ່າ,ຫລືເປັນຜູ້ເຄາະຮ້າຍຂອງຄວາມຮຸນແຮງໃນຄອບຄົວ.
- **ພາກສ່ວນນຶ່ງຂອງການບໍຣິການວຽກງານແລະການຝຶກຝົນ,** ທ່ານຕ້ອງເຂົ້າຮ່ວມໃນການສຳພາດວຽກທຸກໆເທື່ອ,ຮັບເອົາການສະເນີວຽກງານທີ່ເຫມາະສົມ (ນອກຈາກວ່າມັນກົງກັນຂ້າມຕໍ່ສັນຍາຂອງປູມຸນຸມຊຶ່ງທ່ານເປັນສະມາຊິກຫລືວຽກງານຍັງວ່າງຢູ່ຍ້ອນຄວາມຄັດແຍ້ງທາງແຮງງານ) ,ແລະຈະບໍ່ອອກວຽກໂດຍປາສຈາກເຫດຜົນດີ,ຕາມທີ່ຖືກພິຈາຣະນາໂດຍພວກເຮົາ.
- **ທ່ານມີສິດໃນການບໍຣິການວຽກງານແລະການຝຶກຝົນທີ່ເຫມາະສົມ.** ວຽກງານແລະການບໍຣິການວຽກງານແລະການຝຶກຝົນທຸກໆຢ່າງຕ້ອງປອດພັຍ,ບໍ່ແບ່ງແຍກຊົນຊັ້ນວັນນະ,ລວມເອົາກິຈກັມທີ່ຢູ່ພາຍໃນຂອບເຂດຂອງແຜນການບໍຣິການວຽກງານ/ການສຶກສາສ່ວນບຸກຄົນຂອງທ່ານແລະທ່ານສາມາດປະຕິບັດຫນ້າທີ່ຕາມປົກກະຕິ,ກ່ຽວພັນນຳຊົ່ວໂມງທີ່ແມ່ນປົກກະຕິສຳລັບວຽກງານ,ແລະຢູ່ພາຍໃນເວລາເດີນທາງໄປເຮັດວຽກທີ່ເຫມາະສົມ (ບໍ່ດົນນານກວ່າສອງຊົ່ວໂມງຫລືອັນທີ່ຮັບເອົາໄດ້ສຳລັບເຂດນັ້ນ) .ການບໍຣິການຝຶກຝົນຕ້ອງຄ້າຍຄືວ່າຈະນຳພາໃຫ້ທ່ານໄດ້ວຽກງານເຮັດແລະຄ່າແຮງງານຕ້ອງສູງເຖິງຫລືກາຍເກີນຄ່າແຮງງານຕ່ຳສຸດຫລືຕ້ອງບໍ່ຕ່ຳກວ່າທີ່ຖືກຈ່າຍໃຫ້ຕາມປົກກະຕິສຳລັບວຽກງານຄ້າຍຄືກັນ.
- **ຖ້າຫາກວ່າທ່ານຖືກບິ່ງໃຫ້ຮັບເອົາການສະເນີວຽກງານໃຫ້ຫລືເຂົ້າຮ່ວມນຳໃນການບໍຣິການວຽກງານແລະການຝຶກຝົນ RCA,** ແລະຜິດພາດບໍ່ເຮັດ,ການຊ່ວຍເຫລືອຂອງທ່ານຈະຖືກຢຸດຫລືລຸດລົງ.ການລຸດລົງແມ່ນສາມເດືອນສຳລັບການບໍ່ເຂົ້າຮ່ວມນຳເທື່ອທຳອິດແລະຫົກເດືອນສຳລັບການບໍ່ເຂົ້າຮ່ວມນຳແຕ່ລະເທື່ອຫລັງຈາກນັ້ນ.
- **ທ່ານຕ້ອງໄດ້ລາຍງານໃຫ້ພວກເຮົາຊາບໃນຣາຍໄດ້ທຸກໆຢ່າງຖ້າຫາກວ່າທ່ານໄດ້ວຽກເຮັດ** ກ່ອນວັນທີ 10th ຂອງເດືອນຕໍ່ມາ.
- **ຖ້າຫາກວ່າທ່ານເສັຽອົງຄະ,ຕາບອດ,ຫລືອາຍຸກາຍເກີນ 65 ປີ,** ທ່ານສາມາດໄດ້ຮັບເງິນ RCA ໃນຂະນະທີ່ທ່ານຮ້ອງຂໍເອົາໂຄງການຊ່ວຍເຫລືອອື່ນນຳ Social Security Administration (SSA). ພວກເຮົາຈະຊ່ວຍເຫລືອທ່ານຮ້ອງຂໍເອົາໂຄງການເຫລົ່ານີ້.ເມື່ອທ່ານຖືກອະນຸມັດໂຄງການຊ່ວຍເຫລືອນຳ SSA, ການຊ່ວຍເຫລືອ RCA ຂອງທ່ານຈະຢຸດ.
- **ທ່ານບໍ່ສາມາດໄດ້ຮັບເງິນ RCA** ຖ້າຫາກວ່າ,ພາຍໃນ 30 ວັນກ່ອນຄຳຮ້ອງຂໍຂອງທ່ານ,ທ່ານອອກວຽກຂອງທ່ານຫລືປະຕິເສດການສະເນີຈ້າງວຽກງານທີ່ເຫມາະສົມໂດຍປາສຈາກເຫດຜົນດີ

ຄຳແຈ້ງການກ່ຽວກັບສິດທິພົນເມືອງ ແລະ ການບໍ່ແບ່ງແຍກຊົນຊັ້ນວັນນະ

ໂດຍອີງຕາມກົດໝາຍສິດທິພົນເມືອງຂອງລັຖບານກາງ ແລະ ກົດລະບຽບ ແລະ ນະໂຍບາຍສິດທິພົນເມືອງຂອງ USDA, USDA, ອົງການ ຂອງເອົາເຈົ້າ,ຫ້ອງການ,ພະນັກງານ,ແລະສະຖາບັນທີ່ເຂົ້າຮ່ວມບຳຫລືບໍຣິຫານໂຄງການຂອງ USDA ໄດ້ຖືກຫວງຫ້າມຈາກການແບ່ງແຍກຊົນ ຊັ້ນວັນນະໂດຍອີງໃສ່ພື້ນຖານຂອງຜິວພັນ, ສີສັນ, ເຊື້ອຊາດດັ້ງເດີມ, ສາສະນາ, ເພດ,ຄວາມເສັຽອົງຄະ,ອາຍຸ,ສະພາບແຕ່ງງານ,ສະພາບຄອບຄົວ/ ພໍ່ແມ່,ຣາຍໄດ້ໄດ້ມາຈາກໂຄງການຊ່ວຍເຫລືອສາທາຣະນະຊົນ, ຄວາມເຊື່ອຖືທາງດ້ານການເມືອງ, ຫລື ການແກ້ແຄ້ນ ຫລື ການຕອບໂຕ້ສຳລັບ ກິຈກັມກ່ຽວກັບສິດທິພົນເມືອງໃນຜ່ານມາ,ຢູ່ໃນໂຄງການຫລືກິຈກັມຕ່າງໆທີ່ຖືກດຳເນີນການຫລືອອກເງິນທຶນໃຫ້ໂດຍ USDA (ບໍ່ແມ່ນວ່າ ທຸກໆພື້ນຖານຈະໃຊ້ນຳທຸກໆໂຄງການ) .ການປ່ຽນແປງຫລືວັນເສັ້ນຕາຍຂອງການຍື່ນຄຳຮ້ອງທຸກແຕກຕ່າງກັນໄປໂດຍໂຄງການຫລືເຫດການ.

ບຸກຄົນທີ່ມີຄວາມເສັຽອົງຄະຜູ້ທີ່ຕ້ອງການວິທີທາງການຕິດຕໍ່ສື່ສານແບບອື່ນສຳລັບຣາຍຣະອຽດຂອງໂຄງການ (ຕົວຢ່າງວ່າ, ຕົວໜັງສືສຳລັບຄົນ ຕາບອດ, ເອກສານພິມເປັນຕົວໃຫຍ່, ເທັບອັດສຽງ, ພາສາອະເມຣິກັນໃບ້, ອື່ນໆ) ຄວນຈະຕິດຕໍ່ຫາຫ້ອງການຣັດ ຫລືທ້ອງຖິ່ນບ່ອນທີ່ບໍຣິຫານຫລື ຕິດຕໍ່ຫາ USDA ຜ່ານ Telecommunications Relay Service ໄດ້ທີ່ເລກ 711 (ສຽງເວົ້າແລະ TTY). ນອກຈາກນັ້ນອີກ,ຣາຍຣະອຽດຂອງໂຄງການຈະມີໄວ້ໃຫ້ເປັນພາສາອື່ນໆນອກຈາກພາສາອັງກິດ.

ເພື່ອຈະຍື່ນຄຳຮ້ອງທຸກກ່ຽວກັບການແບ່ງແຍກຊົນຊັ້ນວັນນະຂອງໂຄງການ, ຂຽນປະກອບໃບຟອມ USDA Program Discrimination Complaint Form, AD-3027, ຖືກພົບເຫັນຢູ່ທາງອອນລາຍນ໌ຢຸ່ທີ່ How to File a Program Discrimination Complaint ແລະຕາມຫ້ອງການ USDA ທຸກໆບ່ອນຫລືຂຽນໜັງສືໃສ່ທີ່ຢູ່ເຖິງ USDA ເອົາໃສ່ໃນໜັງສືຣາຍຣະອຽດທຸກໆຢ່າງທີ່ຖືກ ຮ້ອງຂໍເອົາຢູ່ໃນໃບຟອມນັ້ນ,ໂທຫາເລກ (866) 632-9992. ສິ່ງໃບຟອມຫລືໜັງສືທີ່ຖືກຂຽນປະກອບແລ້ວຂອງທ່ານໄປຫາ USDA ໂດຍທາງ:

1. **ໄປສະນີ:** USDA Food and Nutrition Service, 1320 Braddock Place, Room 334 Alexandria, VA 22314; ຫລື
2. **ອີເມລ໌:** FNSCIVILRIGHTSCOMPLAINTS@usda.gov.

ສະຖາບັນແຫ່ງນີ້ເປັນຜູ້ບໍຣິການທີ່ໃຫ້ໂອກາດເທົ່າທຽມກັນ.

ໂດຍການເຊັນຊື່ຢູ່ລຸ່ມນີ້,ຂ້າພະເຈົ້າກ່າວວ່າຂ້າພະເຈົ້າໄດ້ມີສິດທິ ແລະ ໜ້າທີ່ຮັບຜິດຊອບຂອງຂ້າພະເຈົ້າກ່ຽວກັບການຮັບເອົາການຊ່ວຍເຫລືອ ແລະ ໂຄງການຂອງກົມ DSHS ຖືກອະທິບາຍໃຫ້ຂ້າພະເຈົ້າຟັງ. ຂ້າພະເຈົ້າເຂົ້າໃຈວ່າຖ້າຂ້າພະເຈົ້າປະຕິເສດທີ່ຈະເຊັນຊື່ໃສ່ເອກສານອັນນີ້ມັນຈະບໍ່ ສະທ້ອນເຖິງເງື່ອນໄຂຮັບການຊ່ວຍເຫລືອຂອງຂ້າພະເຈົ້າແຕ່ວ່າຂ້າພະເຈົ້າຍັງຈະຖືກຖືວ່າຕ້ອງຮັບຜິດຊອບສຳລັບກົດກຳນົດຂອງໂຄງການ ແລະ ຈະຖືກປັບໄໝຕົວໃນຂອງໂຄງການ ຫລື ອາດສະຍາກັມທີ່ກ່ຽວຂ້ອງນຳ.

ລາຍເຊັນຂອງຜູ້ຮ້ອງຂໍ	ວັນທີ	ລາຍເຊັນຂອງຜູ້ຮ້ອງຂໍຮ່ວມກັນ	ວັນທີ

ACES ID ຂອງພະນັກງານ DSHS: ☐ ປະຕິເສດທີ່ຈະເຊັນຊື່.